ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 002 /ທຄຕລ.....ສພບ........
ນະຄອນຫຼວງວຽງຈັນ, ວັນທີ:.....17 FEB 2026..........

# ມະຕິ

## ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ
## ຄັ້ງທີ 01 ປະຈຳປີ 2026, ວັນທີ 17/02/2026

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນ ຄັ້ງທີ 01 ປະຈຳປີ 2026 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 14:00-17:00 ໂມງ ຂອງວັນທີ 17/02/2026 ທີ່ສຳນັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ສຸລິວັດ ສຸວັນນະຈູມຄຳ ປະທານສະພາບໍລິຫານຂອງ ທຄຕລ. ມີສະມາຊິກສະພາບໍລິຫານຈຳນວນ 07 ທ່ານ ເຂົ້າຮ່ວມ (ໃນນີ້ ມີກຳມະການສະພາບໍລິຫານຈຳນວນ 01 ທ່ານ ບໍ່ສາມາດເຂົ້າຮ່ວມກອງປະຊຸມຄື: ທ່ານ ສອນໄຊ ສີລາເພັດ), ມີຄະນະອຳນວຍການ ແລະ ພະແນກກ່ຽວຂ້ອງ ເຂົ້າຮ່ວມເປັນຜູ້ສັງເກດການ.

### ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:

1) ຮັບຊາບລາຍງານຜົນການເຄື່ອນໄຫວດຳເນີນທຸລະກິດປະຈຳປີ 2025;
2) ຮັບຮອງແຜນການດຳເນີນທຸລະກິດປະຈຳປີ 2026 ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
3) ຮັບຊາບລາຍງານການຈັດຕັ້ງປະຕິບັດວຽກງານກວດກາພາຍໃນປະຈຳປີ 2025;
4) ຮັບຊາບລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄວາມສ່ຽງ ແລະ ວຽກງານບາເຊວ II ໃນໄຕຣມາດ 4/2025 ແລະ ປະຈຳປີ 2025;
5) ຮັບຮອງແຜນການຈັດກອງປະຊຸມຜູ້ຖືຮຸ້ນ ສະໄໝສາມັນ ຂອງ ທຄຕລ ປະຈຳປີ 2025 ດັ່ງນີ້:
   - ມື້ປິດປຶ້ມທະບຽນຜູ້ຖືຮຸ້ນ ເພື່ອເຂົ້າຮ່ວມກອງປະຊຸມ: ວັນທີ 17 ມີນາ 2026;
   - ມື້ເປີດກອງປະຊຸມຜູ້ຖືຮຸ້ນ: 30 ເມສາ 2026, ເວລາ 14:30 – 17:30 ໂມງ;
   - ສະຖານທີ່: ຫ້ອງປະຊຸມ ໂຮງແຮມ ລາວພລາຊາ, ນະຄອນຫຼວງວຽງຈັນ;
   - ວາລະກອງປະຊຸມ:
     - ວາລະທີ 01: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈຳປີ 2025;
     - ວາລະທີ 02: ຮັບຊາບລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານ ການເພີ່ມທຶນຈົດທະບຽນຂອງ ທຄຕລ, ການຂາຍຮຸ້ນ ທີ່ ທຄຕລ ຖືຄອງຢູ່ ທະນາຄານລາວ-ຝຣັ່ງ ຈຳກັດ ແລະ ການຂາຍຮຸ້ນທີ່ ທຄຕລ ຖືຄອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ;
     - ວາລະທີ 03: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານ ແລະ ເອກະສານລາຍງານການເງິນຂອງ ທຄຕລ ປະຈຳປີ 2025;

- ວາລະທີ 04: ພິຈາລະນາ ແລະ ຮັບຮອງການຈັດສັນກຳໄລປະຈຳປີ 2025 ເຂົ້າຄັງຕ່າງໆ ແລະ ຈ່າຍເງິນປັນຜົນ;
- ວາລະທີ 05: ພິຈາລະນາ ແລະ ຮັບຮອງເອົາແຜນການປີ 2026;
- ວາລະທີ 06: ພິຈາລະນາ ແລະ ຮັບຮອງເອົາຜູ້ກວດສອບອິດສະຫຼະປະຈຳປີ 2026, 2027 ແລະ 2028;
- ວາລະທີ 07: ພິຈາລະນາ ແລະ ຮັບຮອງແຜນການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນເພີ່ມທຶນຂອງ ທຄຕລ;
- ວາລະທີ 08: ພິຈາລະນາ ແລະ ຮັບຮອງການປັບປຸງກົດລະບຽບຂອງ ທຄຕລ;
- ວາລະທີ 09: ວາລະອື່ນໆ ຖ້າມີ.

6) ຮັບຮອງຜົນການປະເມີນສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານປະຈຳປີ 2025;
7) ຮັບຮອງແບບຟອມ ແລະ ວິທີການປະເມີນສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ປະຈຳປີ 2026;
8) ຮັບຮອງດ້ານຫຼັກການ ກ່ຽວກັບ ການປັບປຸງກົດລະບຽບຂອງ ທຄຕລ;
9) ຮັບຮອງການສະເໜີຂໍກູ້ຢືມຂອງລູກຄ້າສິນເຊື່ອ ຈຳນວນ 4 ລາຍການ ທີ່ຂຶ້ນກັບສິດຂອງສະພາບໍລິຫານ.

**ປະທານສະພາບໍລິຫານ**

**ສຸລິອັດ ສຸອັນນະຈູມຄຳ**